ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ບໍລິສັດ ຊີມັງລາວ ມະຫາຊົນ

LAO CEMENT PUBLIC COMPANY

ບ້ານໂພນພະເນົາ ວຽງຈັນ, ສ.ປ.ປ.ລາວ ຕູ້ປນ 6821, ໂທຣ: (865-21) 451222, 451116 ແຟັກ: 451117

PHONPHANAO VILLAGE,VIENTIANE, LAO P.D.R. P.O.BOX 6821, TEL : (856 - 21) 451222, 451116 FAX: 451117

E-mail:Lcc@laocement.com,www.laocement.com

ເລກທີ 300 /ບຊລ

ນະຄອນຫລວງວຽງຈັນ, ວັນທີ 29 DEC 2020

ຮຽນ : ທ່ານ ຫົວໜ້າສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ
: ທ່ານ ຜູ້ອຳນວຍການໃຫ່ຍຕະຫລາດຫຼັກຊັບລາວ
: ທ່ານ ຜູ້ຖືຮຸ້ນຂອງບໍລິສັດ ຊີມັງລາວ ມະຫາຊົນ

ເລື່ອງ : ແຈ້ງມະຕິທີ່ສຳຄັນຂອງກອງປະຊຸມວິສາມັນຜູ້ຖືຮຸ້ນ ປີ 2020 ຄັ້ງວັນທີ 28/12/2020

- ອີງຕາມຂໍ້ຕົກລົງວ່າດ້ວຍການລາຍງານ ແລະ ການເປີດເຜີຍຂໍ້ມູນ (ສະບັບປັບປຸງ) ຂອງ ສຄຄຊ ສະບັບ ເລກທີ 04/ສສຄ ລົງວັນທີ 28 ມັງກອນ ປີ 2019.
- ອີງຕາມລະບຽບຂອງຕະຫຼາດຫຼັກຊັບລາວວ່າດວ້ຍການເປີດເຜີຍຂໍ້ມູນ ສະບັບເລກທີ 008/ຕລຊລ, ລົງ ວັນທີ 27 ກັນຍາ 2018.

ບໍລິສັດ ຊີມັງລາວ ມະຫາຊົນ (ບໍລິສັດ) ຂໍຖືເປັນກຽດແຈ້ງມະຕິທີ່ສຳຄັນ ຂອງກອງປະຊຸມ ວິສາມັນຜູ້ຖືຮຸ້ນ ປີ 2020 (ຕໍ່ໄປນີ້ຮຽກວ່າ : ກອງປະຊຸມ) ໄດ້ໄຂຂຶ້ນໃນເວລາ 14:00 ຫາ 16:00 ໂມງ ຂອງວັນທີ 28/12/2020 ທີ່ຫ້ອງປະຊຸມຊັ້ນ 8 ອາຄານຕະຫຼາດຫຼັກຊັບລາວ ນະຄອນຫຼວງວຽງຈັນ ໂດຍ ການເປັນປະທານຂອງ ທ່ານ ຈ່າງລີ ຜູ້ອຳນວຍການ ບຊລ, ພ້ອມດ້ວຍສະມາຊິກສະພາບໍລິຫານ ບຊລ, ຊຶ່ງມີຜູ້ເຂົ້າຮ່ວມກອງປະຊຸມທັງໝົດ 16 ທ່ານ, ໃນນີ້ ມີຜູ້ຖືຮຸ້ນເຂົ້າຮ່ວມດ້ວຍຕົນເອງຈຳນວນທັງໝົດ 11 ທ່ານ, ຜູ້ມອບສິດຈຳນວນ 05 ທ່ານ, ຊຶ່ງກວມຈຳນວນຮຸ້ນທັງໝົດທີ່ເຂົ້າຮ່ວມກອງປະຊຸມເທົ່າກັບ **35,570,000** ຮຸ້ນ, ນັບທັງຮຸ້ນທີ່ຖືກມອບສິດ, ບັນລຸອັດຕາສ່ວນ 89% ຂອງຈຳນວນຮຸ້ນ ບຊລ ທັງ ໝົດ ແລະຖືວ່າຄົບອົງປະຊຸມ ເພື່ອໃຫ້ສາມາດດຳເນີນກອງປະຊຸມໄດ້ຕາມລະບຽບການຂອງ ບຊລ ແລະ ກົດໝາຍທີ່ກ່ຽວຂ້ອງ, ສຳລັບຮຸ້ນທີ່ບໍ່ສາມາດເຂົ້າຮ່ວມກອງປະຊຸມມີຈຳນວນ 4,434,000 ຮຸ້ນເທົ່າກັບ 11% ຂອງຈຳນວນຮຸ້ນ ບຊລ.

<u>ກອງປະຊຸມໄດ້ພິຈາລະນາ ແລະມີມະຕິດັ່ງນີ້</u> :

- **ວາລະທີ 1:** ພິຈາລະນາ ແລະ ຮັບຮອງແຜນການປະກອບຮຸ້ນ ແລະຟື້ນຟູທຸລະກິດຂອງ ບໍລິສັດ ຊີມັງ ລາວ ມະຫາຊົນ
- **ມະຕິ** : ກອງປະຊຸມໄດ້ພິຈາລະນາ ແລະເຫັນດີດ້ວຍຄະແນນສຽງທັງໝົດຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມຄື :

- ເຫັນດີຈຳນວນ	35,570,000	ສຽງ	ເທົ່າກັບ 100 %
- ບໍ່ເຫັນດີຈຳນວນ	0	ສຽງ	ເທົ່າກັບ 0 %

ດັ່ງນັ້ນ, ຈຶ່ງຮຽນມາຍັງທ່ານ ເພື່ອຊາບ ໃຊ້ຕາງລາຍງານ
ດ້ວຍຄວາມເຄົາລົບ ແລະນັບຖືເປັນຢ່າງສູງ,

ປະທານກອງປະຊຸມ

ຈ່າງລີ້

ໝາຍເຫດ :
ເອກະສານທັງໝົດນີ້ໃຫ້ຖືເອົາສະບັບພາສາລາວເປັນຫຼັກ